ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ການທົບທວນ ລະບຽບການ ວ່າດ້ວຍການຂຸດຄົ້ນໄມ້ ແລະ ການອະນາໄມຫຼັງການຂຸດຄົ້ນ ໃນຂອບເຂດອ່າງເກັບນ້ຳ ຂອງເຂື່ອນໄຟຟ້ານ້ຳຕົກ

ເລກທີ 0112/ກປ, ພະຈິກ 2008






ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

## ເນື້ອໃນບົດສະເໜີ

1. ປະຫວັດຄວາມເປັນມາ ແລະ ເຫດຜົນຂອງການທົບທວນ
2. ຈຸດປະສົງ ຂອງການທົບທວນ
3. ຜົນໄດ້ຮັບຂອງການທົບທວນ
4. ຂໍ້ສະເໜີ ໃນການປັບປຸງລະບຽບການ ເລກທີ 0112/ກປ ເປັນ ລະບຽບການວ່າດ້ວຍການຂຸດຄົ້ນໄມ້ ໃນ ໃນເຂດກໍ່ສ້າງພື້ນຖານໂຄງລ່າງ
5. ແຜນວຽກ ແລະ ກອບເວລາ ໃນການສ້າງລະບຽບການ ວ່າດ້ວຍ ການຂຸດຄົ້ນໄມ້ ໃນເຂດພັດທະນາ ພື້ນຖານໂຄງລ່າງ ແລະ ການຮ່າງນິຍາມໄມ້

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

### 1. ປະຫວັດຄວາມເປັນມາ ແລະ ເຫດຜົນຂອງການທົບທວນ

- ລະບຽບການ ເລກທີ 0112/ກປ, ພະຈິກ 2008 ແມ່ນເໝາະສົມ ໃນການຮັບຮອງໃຫ້ແກ່ການຂຸດຄົ້ນໄມ້ ໃນບັນດາໂຄງການໄຟຟ້ານໍ້າຕົກ ທີ່ເພີ່ມຂຶ້ນ ຢ່າງໄວວາໃນ ສປປ ລາວ
- ລະບຽບການນີ້ ໄດ້ປະກາດນໍາໃຊ້ ພະຈິກ 2008 ເຊິ່ງຮອດປະຈຸບັນໄດ້ນໍາໃຊ້ ເປັນເວລາ 8 ປີ
- ຫຼັງຈາກການປະກາດໃຊ້ ໄດ້ມີ ກົດໝາຍ ແລະ ລະບຽບການ ຈໍານວນໜຶ່ງທີ່ໄດ້ປະກາດ ແລະ ບັງຄັບໃຊ້.
- ສະນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງທົບທວນ ເພື່ອສຶກສາຊ່ອງຫ່ວາງ ເພື່ອປັບປຸງ ຫຼື ພິຈາລະນາລະບຽບການນີ້ ເພື່ອດັດປັບ ເປັນລະບຽບການ "ວ່າດ້ວຍ ການຂຸດຄົ້ນໄມ້ ໃນເຂດກໍ່ສ້າງພື້ນຖານໂຄງລ່າງ"
- ການປັບປຸງລະບຽບການນີ້ ຫຼື ການສ້າງລະບຽບການໃໝ່ ວ່າດ້ວຍ ການຂຸດຄົ້ນໄມ້ໃນເຂດກໍ່ສ້າງພື້ນຖານໂຄງລ່າງ ຈະເປັນສ່ວນໜຶ່ງຂອງການສ້າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ (TLD) ໃນເຂດກໍ່ສ້າງພື້ນຖານໂຄງລ່າງ ແລະ ຕໍ່ໄປຈະນໍາໃຊ້ເຂົ້າໃນ ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS) ພາຍໃຕ້ແຜນງານ FLEGT VPA ໃນ ສປປ ລາວ.



ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

### 2. ຈຸດປະສົງ ຂອງການທົບທວນ

ຈຸດປະສົງຂອງການທົບທວນນີ້ແມ່ນເພື່ອ:

- ສຶກສາບັນດາຊ່ອງຫວ່າງຂອງລະບຽບການນີ້ ເພື່ອພິຈາລະນາວ່າ ມີຄວາມຈໍາເປັນຕ້ອງປັບປຸງ ຫຼື ບໍ່
- ພິຈາລະນາລະບຽບການສະບັບນີ້ ວ່າຈະສາມາດດັດປັບ ແລະ ນໍາໃຊ້ເຂົ້າໃນ ເຂດກໍ່ສ້າງພື້ນຖານໂຄງລ່າງ ໃນ ສປປ ລາວ ໄດ້ ຫຼື ບໍ່, ແລະ
- ນໍາສະເໜີແຜນງານການປັບປຸງ ແລະ ສ້າງລະບຽບການດັ່ງກ່າວ.

## 3. ຜົນໄດ້ຮັບ ຂອງການທົບທວນ

- ໂດຍລວມແລ້ວ, ລະບຽບການນີ້ໄດ້ວາງກອບວຽກທີ່ດີກ່ຽວກັບການດຳເນີນງານຂຸດຄົ້ນໄມ້ ແລະ ການ ອະນາໄມຫຼັງການຂຸດຄົ້ນໃນພື້ນທີ່ອ່າງເກັບນ້ຳຂອງເຂື່ອນໄຟຟ້ານ້ຳຕົກ
- ແຕ່ຢ່າງໃດກໍ່ຕາມ ຂອບເຂດຂອງລະບຽບການນີ້ ອາດຈະກວ້າງພໍສົມຄວນ ທີ່ໄດ້ກວມເອົາ ການຂຸດຄົ້ນ ເຄື່ອງປ່າຂອງດົງ, ການຄຸ້ມຄອງ ສັດນ້ຳ-ສັດປ່າ ແລະ ການອະນາໄມມອນສານຊີວະ
- ອາດມີການລະບຸ ຢ່າງຈະແຈ້ງຕື່ມ ກ່ຽວກັບ ວິທີການສຳຫຼວດ ແລະ ວິທີການປະເມີນບໍລິມາດໄມ້ຢືນຕົ້ນ ແລະ ຂະໜາດຂອງດອນຕົວຢ່າງ ແລະ ໜ້າຕ້າງຂອງໄມ້ທີ່ຈະຕ້ອງໄດ້ດຳເນີນສຳຫຼວດ
- ບໍ່ທັນໄດ້ລະບຸ ການຂຶ້ນທະບຽນໄມ້ ເປັນຊັບສິນຂອງລັດ ຢູ່ພະແນກການເງິນແຂວງ ກ່ອນດຳເນີນການ ປະມູນຂາຍໄມ້.
- ການໝາຍໜ້າທ່ອນໄມ້" ການໝາຍໜ້າທ່ອນໄມ້ຄວນໃສ່ລະຫັດ ເຊິ່ງປະກອບມີ: ຂະໜາດໜ້າຕ້າງ, ລວງຍາວ ທີ່ມີຫົວໜ່ວຍເປັນຊັງຕີແມັດ, ນ້ຳເບີທ່ອນໄມ້ ແລະ ເຂດຂຸດຄົ້ນ ແລະ ຕີຄ້ອນກາໄມ້ ແມ່ນມີຂໍ້ມູນຫຼາຍ ໃນ ໜ້າໄມ້.
- ວິທີການໃນການດຳເນີນການປະມູນຂາຍໄມ້ ເປັນຕົ້ນໃນການຂຶ້ນທະບຽນເປັນຊັບສິນຂອງລັດ, ການປະມູນ, ການຂາຍ ແລະ ການລຶບລ້າງບັນຊີໄມ້ອອກຈາກບັນຊີຊັບສິນຂອງລັດ ກ່ອນເຄື່ອນຍ້າຍໄມ້ອອກຈາກສະໜາມ 2 ຍັງບໍ່ທັນຈະແຈ້ງ.





## 4. ຂໍ້ສະເໜີ ໃນການປັບປຸງລະບຽບການ ເລກທີ 0112/ກປ ເປັນ ລະບຽບການວ່າດ້ວຍການຂຸດຄົ້ນໄມ້ ໃນ ໃນເຂດກໍ່ສ້າງພື້ນຖານໂຄງລ່າງ

- ສະເໜີເອົາການຂຸດຄົ້ນໄມ້ເປັນຂອບເຂດ/ວຽງານຕົ້ນຕໍຂອງລະບຽບການນີ້, ເນື່ອງຈາກວ່າ ໃນຂຸດຄົ້ນ ແມ່ນ ມີເວລານ້ອຍ ແລະ ເປັນວຽກທີ່ຕ້ອງບັນລຸ ໃນໄລຍະເວລາທີ່ແນ່ນອນ ເພື່ອໃຫ້ທັນເວລາ ແລະ ສອດຄ່ອງກັບ ແຜນການພັດທະນາພື້ນຖານໂຄງລ່າງທີ່ໄດ້ການົດໄວ້ແລ້ວ.

- ສໍາລັບການຂຸດຄົ້ນເຄື່ອງປ່າຂອງດົງ ແມ່ນອາດສະເໜີໃຫ້ຮ່າງ ເປັນລະບຽບການອີກຕ່າງຫາກ ທີ່ມີວິທີ ການລະອຽດກ່ຽວກັບການຂຸດຄົ້ນ ເນື່ອງຈາກວ່າເຄື່ອງປ່າຂອງດົງແມ່ນມີຫຼາຍປະເພດ.

- ສໍາລັບການຄຸ້ມຄອງສັດນ້ຳ-ສັດປ່າ, ການຄຸ້ມຄອງສະຖານທີ່ບູຮານ ແລະ ການອະນາໄມຊີວະມອນ ແມ່ນສະເໜີໃຫ້ດຳເນີນການພາຍໃຕ້ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບ ປັບປຸງ ເລກທີ 29/ສພຊ ທັນວາ 2012 ຫຼື ບົດລາຍງານແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMMP).

4. ຂໍ້ສະເໜີ ໃນການປັບປຸງລະບຽບການ ເລກທີ 0112/ກປ ເປັນ ລະບຽບການວ່າດ້ວຍການຂຸດຄົ້ນໄມ້ໃນ ໃນເຂດກໍ່ສ້າງພື້ນຖານໂຄງລ່າງ ຕໍ່

- ໂດຍລວມແລ້ວ ຂັ້ນຕອນການ**ຂຸດຄົ້ນໄມ້, ປະມູນ ແລະ ຂາຍໄມ້** ໃນໂຄງການບໍ່ແຮ່ ແລະ ໂຄງການກໍ່ສ້າງໂຄງລ່າງພື້ນຖານ  ແມ່ນຄ້າຍຄືກັບ ໂຄງການເຂື່ອນໄຟຟ້ານ້ຳຕົກ
- ຈຸດແຕກຕ່າງທີ່ສຳຄັນແມ່ນ ການກຳນົດ ວິທີການສຳຫຼວດ ແລະ ການປະເມີນບໍລິມາດໄມ້ຢືນຕົ້ນ.
- ສະນັ້ນ, ລະບຽບການກ່ຽວກັບການຂຸດຄົ້ນໄມ້ ຂອງບັນດາໂຄງການພັດທະນາ  ແມ່ນສາມາດເອົາເຂົ້າກັນເປັນ **ລະບຽບການ ວ່າດ້ວຍ ການຂຸດຄົ້ນໄມ້ ໃນເຂດກໍ່ສ້າງພື້ນຖານໂຄງລ່າງ**
- ບັນດາກິດຈະກຳ ໃນການຂຸດຄົ້ນໄມ້ ແຕ່ຈຸດຂຸດຄົ້ນ ຫາ ສະໜາມໄມ້ 3 ຂອງລະບຽບການ ວ່າດ້ວຍ ການຂຸດຄົ້ນໄມ້ໃນເຂດກໍ່ສ້າງພື້ນຖານໂຄງລ່າງ ອາດລວມມີ:

Logging activities.docx



ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

**5. ແຜນວຽກ ແລະ ກອບເວລາ ໃນການສ້າງລະບຽບການ ວ່າດ້ວຍ ການຂຸດຄົ້ນໄມ້ ໃນເຂດພັດທະນາພື້ນຖານໂຄງລ່າງ**

- ການປັບປຸງ ແລະ ສ້າງລະບຽບການ ວ່າດ້ວຍ ການຂຸດຄົ້ນໄມ້ໃນເຂດກໍ່ສ້າງພື້ນຖານໂຄງລ່າງ ແມ່ນສະເໜີໃຫ້ໃຊ້ເວລາຢູ່ປະມານ 3 ເດືອນ ເລີ່ມຕັ້ງແຕ່ເດືອນ ພະຈິກ 2016 ຫາ ເດືອນ ມັງກອນ 2017.

Time schedule.docx

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

## ວຽກງານຕໍ່ໜ້າ ໃນການສ້າງນິຍາມໄມ້ທີ່ຖືກຕອ້ງຕາມກົດໝາຍ ຂອງໄມ້ຈາກເຂດກໍ່ສ້າງພື້ນຖານໂຄງລ່າງ

- ສ້າງນິຍາມໄມ້ທີ່ຖືກຕອ້ງຕາມກົດໝາຍ ຂອງໄມ້ຈາກເຂດກໍ່ສ້າງພື້ນຖານໂຄງລ່າງ
- ຄັດເລືອກ ເອົາໜຶ່ງ ພື້ນທີ່ ກໍ່ສ້າງພື້ນຖານໂຄງລ່າງ ໃນການທົດລອງ ສ້າງນິຍາມໄມ້ທີ່ຖືກຕອ້ງຕາມກົດໝາຍ ຂອງໄມ້ຈາກເຂດກໍ່ສ້າງພື້ນຖານໂຄງລ່າງ

**ຄຳຖາມ:**

1. ພາກສ່ວນອົງການຈັດຕັ້ງໃດ ທີ່ຈະເຂົ້າຮ່ວມໃນການ ປັບປຸງລະບຽບການ ວ່າດ້ວຍ ການຂຸດຄົ້ນໄມ້ ຈາກເຂດກໍ່ສ້າງພື້ນຖານໂຄງລ່າງ ແລະ ສ້າງນິຍາມໄມ້ທີ່ຖືກກົດໝາຍ ຈາກເຂດກໍ່ສ້າງພື້ນຖານໂຄງລ່າງ?
2. ອົງການຈັດຕັ້ງໃດຈະ**ເປັນຕົວຫຼັກ** ໃນການຮ່າງນິຍາມໄມ້ ທີ່ຖືກກົດໝາຍ ຈາກເຂດກໍ່ສ້າງພື້ນຖານໂຄງລ່າງ?



ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ຂໍ ຂອບໃຈ